ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

ພິທີເຊັນສັນຍາຮ່ວມທຶນ ການສ້າງຕັ້ງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດ

ໃນວັນທີ 07 ຕຸລາ 2024 ທີ່ ຫ້ອງປະຊຸມ ທະນາຄານແຫ່ງ ສປປ ລາວ (ທຫລ), ທຫລ ໄດ້ຈັດພິທີເຊັນສັນຍາຮ່ວມທຶນ ການສ້າງຕັ້ງບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ລະຫວ່າງ ທຫລ ແລະ ທະນາຄານທຸລະກິດຈຳນວນ 11 ແຫ່ງ ເພື່ອຮ່ວມລົງທຶນໃນການສ້າງຕັ້ງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ. ຕາງໜ້າເຊັນສັນຍາຮ່ວມທຶນໃນຄັ້ງນີ້ ໂດຍແມ່ນ **ທ່ານ ພານຸສັກ ແກ່ນວົງພະຈັນ** ຫົວໜ້າຫ້ອງການ ທຫລ ແລະ ບັນດາທ່ານຄະນະຜູ້ອຳນວຍການ ຂອງ ທະນາຄານ ທຸລະກິດ ຈຳນວນ 11 ແຫ່ງ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີ ຂອງ **ທ່ານ ນ. ວັດທະນາ ດາລາລອຍ ຮັກສາການ ຜູ້ວ່າການ ທຫລ**, ພ້ອມດ້ວຍບັນດາທ່ານຮອງຜູ້ວ່າການ ທຫລ, ຄະນະກົມກ່ຽວຂ້ອງ ຂອງ ທຫລ, ບັນດາທະນາຄານທຸລະກິດ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ **ທ່ານ ນ. ຝອງຈິນດາ ແສງສຸລິວົງ** ຫົວໜ້າກົມນະໂຍບາຍເງິນຕາ, ທຫລ ໄດ້ນຳສະເໜີກ່ຽວກັບຄວາມຄືບໜ້າໃນການສ້າງຕັ້ງຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ໂດຍໃຫ້ຮູ້ວ່າ: ນັບຕັ້ງແຕ່ຕົ້ນເດືອນ ສິງຫາ 2024 ທີ່ ທຫລ ແລະ ບັນດາ ທະນາຄານທຸລະກິດ ຈຳນວນ 15 ແຫ່ງ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈໃນການສ້າງຕັ້ງຕະຫຼາດດັ່ງກ່າວ ແລະ ໄດ້ມີການ

ພັດທະນາລະບົບແລກປ່ຽນເງິນຕາ ໃຫ້ສາມາດເຊື່ອມຕໍ່ກັບລະບົບຂອງບັນດາ ທະນາຄານທຸລະກິດ (ທທກ) ແລະ ມີຄວາມພ້ອມທີ່ຈະເປີດໃຫ້ບໍລິການແກ່ມວນຊົນ, ຊຶ່ງນັບແຕ່ວັນທີ 22 ສິງຫາ 2024 ເປັນຕົ້ນມາ ໄດ້ມີການເປີດທົດລອງນຳໃຊ້ລະບົບແລກປ່ຽນເງິນຕາຕ່າງປະເທດ ຂອງຕະຫຼາດດັ່ງກ່າວ ໂດຍຜ່ານແອັບພລິເຄຊັນ ເທິງມືຖື ຂອງ ທທກ ຈຳນວນໜຶ່ງ ທີ່ສາມາດໃຫ້ບໍລິການໃນໄລຍະທຳອິດ ແລະ ມາຮອດປະຈຸບັນ ມີ 7 ທະນາຄານທີ່ເຂົ້າຮ່ວມໃຫ້ບໍລິການຜ່ານຕະຫຼາດດັ່ງກ່າວ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານສົ່ງເສີມກະສິກຳ, ທະນາຄານເອັດທີ, ທະນາຄານບີໄອຊີ, ທະນາຄານຮ່ວມພັດທະນາ, ທະນາຄານພັດທະນາລາວ ແລະ ທະນາຄານຮ່ວມທຸລະກິດ ລາວ-ຫວຽດ. ໃນໄລຍະເລີ່ມຕົ້ນ ມີພຽງ 3 ສະກຸນ ທີ່ແລກປ່ຽນຊື້-ຂາຍ ຄື: ໂດລາສະຫະລັດ, ບາດ ແລະ ຢວນ, ແລະ ບໍ່ອະນຸຍາດໃຫ້ມີການແລກປ່ຽນເງິນຕາຕ່າງປະເທດຂ້າມສະກຸນອື່ນສາມາດນຳໃຊ້ຜ່ານຊ່ອງທາງອອນລາຍເປັນຕົ້ນ ນຳໃຊ້ຜ່ານ ແອັບພລິເຄຊັນ ເທິງມືຖື ຫຼື ເວັບໄຊ, ລະບົບແມ່ນຮອງຮັບການເຮັດທຸລະກຳຜ່ານ LAPNET ຊຶ່ງຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ຜູ້ຊື້-ຂາຍ ເງິນຕາຜ່ານຕະຫຼາດດັ່ງກ່າວ ສາມາດດຳເນີນການຊື້-ຂາຍຂ້າມທະນາຄານໄດ້. ການເຮັດທຸລະກຳຊື້-ຂາຍ ຈະຮອງຮັບແຕ່ການເຮັດທຸລະກຳຊື້-ຂາຍເງິນຕາ ແບບທັນທີ (Spot) ເທົ່ານັ້ນ. ຜ່ານການເປີດຕົວທົດລອງນຳໃຊ້ລະບົບດັ່ງກ່າວ ເຫັນວ່າ: ສັງຄົມໃຫ້ຄວາມສົນໃຈ ແລະ ນຳໃຊ້ບໍລິການແລກປ່ຽນເງິນຕາຕ່າງປະເທດຜ່ານຕະຫຼາດດັ່ງກ່າວ ເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ຄຽງຄູ່ກັນນີ້, ທຫລ ໄດ້ສືບຕໍ່ຮ່ວມເຮັດວຽກກັບບັນດາ ທທກ ເພື່ອກະກຽມເງື່ອນໄຂດ້ານຕ່າງໆ ໃນການເປີດບໍລິສັດຢ່າງເປັນທາງການໃນມໍ່ໆນີ້. ສະນັ້ນ, ມາຮອດປະຈຸບັນ, ທຫລ ໄດ້ຮັບການການຕອບຮັບຈາກບັນດາ ທທກ ໃນການສະແດງເຈດຈຳນົງຕໍ່ກັບການເຂົ້າຮ່ວມທຶນໃນການສ້າງຕັ້ງບໍລິສັດດັ່ງກ່າວ ຈຳນວນ 11 ແຫ່ງ ແລະ ມີ ທຫລ ເປັນໜຶ່ງໃນຜູ້ຮ່ວມທຶນນຳ ເຮັດໃຫ້ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ຈະປະກອບມີຜູ້ຮ່ວມຖືຮຸ້ນທັງໝົດ 12 ພາກສ່ວນຄື: ທຫລ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານສົ່ງເສີມກະສິກຳ, ທະນາຄານເອັສທີ, ທະນາຄານບີໄອຊີ, ທະນາຄານຮ່ວມພັດທະນາ, ທະນາຄານຮ່ວມທຸລະກິດລາວ-ຫວຽດ, ທະນາຄານພັດທະນາລາວ, ທະນາຄານອິນໂດຈີນ, ທະນາຄານລາວ-ຝຣັ່ງ , ທະນາຄານພົ້ງສະຫວັນ ແລະ ທະນາຄານມາຮູຮານເຈແປນລາວ. ພາຍຫຼັງການຮ່ວມເຊັນສັນຍາຮ່ວມທຶນໃນມື້ນີ້ແລ້ວ, ບັນດາຂາຮຸ້ນຕ່າງໆ ຈະຮີບຮ້ອນດຳເນີນການສ້າງຕັ້ງບໍລິສັດ ໃຫ້ສຳເລັດໂດຍໄວຕາມຄາດໝາຍ ແລະ ຈະເປີດບໍລິສັດ ແລະ ນຳໃຊ້ລະບົບຂອງຕະຫຼາດແລກປ່ຽນເງິນຕາຕ່າງປະເທດຢ່າງເປັນທາງການໃນທ້າຍເດືອນຕຸລາ 2024 ທີ່ຈະມາເຖິງນີ້.

ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ